ການໃຫ້ການສະຫນັບສະຫນູນທາງດ້ານການເງິນໃຫ້ແກ່ ອົງການບໍ່ສະແຫວງຫາກຳໄລ PEACE

ໃນວັນທີ 19 ພຶດສະພາ 2020, ທ່ານ ຟຸຈິວະຣະ ມະຊະຮິໂຣະ, ປະທານ ມູນນິທິສະຫວັດດີການ ການສຶກສາເພື່ອຊາວ ອາຊີ ແລະ ທ່ານນາງ ມາລິບ ເຊັງ ບູ(Marip Seng Bu), ປະທານອົງການ PEACE ໄດ້ລົງນາມ ສັນຍາຂໍ້ຕົກລົງການ ສະຫນັບສະຫນູນທາງດ້ານການເງິນ ຈຳນວນທັງຫມົດ 2.5 ລ້ານເຢັນ.

ນີ້ແມ່ນໂຄງການສະຫນັບສະຫນູນ ໃຫ້ແກ່ອົງການ PEACE ເຊິ່ງເປັນອົງການທີ່ໃຫ້ການຊ່ວຍເຫຼືອ ກ່ຄື ທາງດ້ານສະບຽງ ອາຫານຕ່າງໆໃຫ້ແກ່ຜູ້ອົບພະຍົກມາຕັ້ງຖິ່ນຖານຢູ່ປະເທດຍີ່ປຸ່ນທີ່ປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ເນື່ອງຈາກການ ແຜ່ລະບາດຂອງພະຍາດອັກເສບປອດໂຄໂລນາສາຍພັນໃຫມ່ (Covid-19).

ໂດຍຜ່ານໂຄງການສະຫນັບສະຫນູນດັ່ງກ່າວ, ຜູ້ອົບພະຍົກຄົນມຽນມ້າທີ່ມາຕັ້ງຖິ່ນຖານຢູ່ປະເທດຍີ່ປຸ່ນຈຳນວນ 60 ຄົວ ເຮືອນຈະໄດ້ຮັບການແຈກຍາຍ ເຂົ້າສານປະລິມານກິນກຸ້ມ 2 ເດືອນ, ນ້ຳມັນເພື່ອປຸງແຕ່ງອາຫານ, ອາຫານກະປ໋ອງ ແລະ ເຄື່ອງສຸກຂະອານະໄມຕ່າງໆ.

ທ່ານປະທານ ຟຸຈິວະຣະ ຮັບຟັງການອະທິບາຍ ຈາກທ່ານນາງ ມາລິບ ເຊັງ ບູ, ປະທານອົງການ ແລະ ທ່ານ ໂຊບາລາຕິງ, ຮອງປະທານອົງການ ກ່ຽວກັບສະຖານະການຄວາມຫຍຸ້ງຍາກປະຈຸບັນຂອງຜູ້ອົບພະຍົກຄົນມຽນມ້າທີ່ມາຕັ້ງຖິ່ນຖານຢູ່ປະເທດຍີ່ປຸ່ນ.